**1. ວິໄສທັດ ລວມ ວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮອດປີ 2030:**

**ພັດທະນາວຽກງານ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີຄຸນນະພາບ, ກ້າວໄວ, ກ້າວໄກ, ທັນເປັນອຸດສາຫະກຳ ທັນສະໄໝ, ປອດໄພ ແລະ ສົ່ງເສີມການມີສ່ວນຮ່ວມຂອງສັງຄົມ ເພື່ອຄວາມຍືນຍົງ.**

**1.1. ວິໄສທັດ ວຽກງານຖະແຫຼງຂ່າວ ຮອດປີ 2030**

ພັດທະນາວຽກຖະແຫຼງຂ່າວ ໃຫ້ມີຄຸນນະພາບຢ່າງຮອບດ້ານ, ປັບປຸງການບໍລິການດ້ານສື່ມວນຊົນໃຫ້ມີຄວາມຫຼາກຫຼາຍ ແລະ ທັນສະໄໝ, ສາມາດເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານໄດ້ ຢູ່ທຸກທີ່ ທຸກເວລາ.

**1.2. ວິໄສທັດ ວຽກງານວັດທະນະທຳ ຮອດປີ 2030**

ອານຸລັກ,ປົກປັກຮັກສາ, ສືບທອດ, ຟື້ນຟູ ແລະ ເສີມຂະຫຍາຍມູນເຊື້ອ ຄຸນຄ່າມໍລະດົກວັດທະນະທຳ ອັນດີງາມຂອງຊາດໃຫ້ມີຄວາມຍືນຍົງ, ປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະທຳໃຫ້ມີຄວາມຫຼາກຫຼາຍ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**1.3. ວິໄສທັດ ວຽກງານທ່ອງທ່ຽວ ຮອດປີ 2030**

ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໃຫ້ກາຍເປັນອຸດສາຫະກຳ ທັນສະໄໝ, ຄົບວົງຈອນ ແລະ ເປັນຂະແໜງເສດຖະກິດນຳໜ້າ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃນລະດັບທີ່ແນ່ນອນ.

**1.4. ວິໄສທັດ ວຽກງານເສນາທິການ ຮອດປີ 2030**

ພັດທະນາລະບົບການຄຸ້ມຄອງບໍລິຫານ, ປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລະກອນໃຫ້ເຂັ້ມແຂງ,ສ້າງພື້ນຖານໂຄງລ່າງດ້ານວິຊາການຂອງຂະແໜງການ, ຮັບປະກັນດ້ານປະລິມານ ແລະ ມີຄຸນນະພາບ, ວາງແຜນພັດທະນາ ວຽກງານ ຖວທ ຢ່າງມີຈຸດສຸມ ແລະ ມີວິທະຍາສາດ.